# Gender and Labour in the Global South

Article – Laotian

This translation is for a better understanding of the English texts. We are very happy if you join the discussions. Please note that all contributions in the comment section and in the discussion steps need to be in English.

**Gender and the world of work: a multifaceted relationship**

ເພດ ແລະ ໂລກຂອງການເຮັດວຽກ: ຄວາມສຳພັນຫຼາກຫຼາຍແງ່ມູມ

**Short description:**
ອ່ານວິທີທີ່ Yamila Pita ສະຫຼຸບເນື້ອໃນເບື້ອງຕົ້ນທີ່ເຊື່ອມໂຍງເພດ ແລະ ຕະຫຼາດແຮງງານ.

**Content:**

ໃນອາທິດນີ້, ພວກເຮົາໄດ້ນຳສະເໜີຫຼາຍຫົວຂໍ້ທີ່ຊ່ວຍໃຫ້ພວກເຮົາເຂົ້າໃຈເຖິງບົດບາດຂອງເພດໃນຕະຫຼາດແຮງງານ. ແຜນທີ່ແນວຄິດຕໍ່ໄປນີ້ຈະພິຈາລະນາເຖິງແນວຄວາມຄິດຫຼັກທີ່ພວກເຮົາໄດ້ເຮັດວຽກ ແລະ ປຶກສາຫາລືຜ່ານມາ (ແລະ ພວກເຮົາຈະກັບມາເບິ່ງອີກໃນອາທິດຂ້າງໜ້າ).



University of Basel

ທຳອິດ ພວກໄດ້ນຳສະເໜີກ່ຽວກັບຕະຫຼາດແຮງງານທີ່ມີການແບ່ງເພດ ເຊິ່ງເຮັດໃຫ້ພວກເຮົາສາມາດທ້າທາຍສົມມຸດຖານທີ່ວ່າ ຕະຫຼາດແຮງງານເປັນສະຖາບັນທີ່ເປັນກາງ. ໃນຄວາມເປັນຈິງແລ້ວ, ບົດບາດທາງເພດ, ບັນທັດຖານ ແລະ ການພົວພັນທີ່ມີຢູ່ໃນສັງຄົມ ມີອິດທິພົນຫຼາຍຕໍ່ວິທີການກໍ່ຕົວຂອງຮູບແບບຕະຫຼາດແຮງງານ.

ຍິ່ງກວ່ານັ້ນ, ການແບ່ງແຍກເພດຂອງແຮງງານ ຍັງໄດ້ຮັບການຈັດການໂດຍບົດບາດທາງເພດ, ແບບແຜນ ແລະ ຄວາມຄາດຫວັງຕ່າງໆ. ການພິຈາລະນານີ້ ເປັນຫົວໃຈສຳຄັນ ເນື່ອງຈາກຊ່ວຍໃຫ້ສາມາດວິເຄາະເຖິງຄວາມແຕກຕ່າງລະຫວ່າງວຽກທີ່ມີປະສິດທິຜົນ ແລະ ວຽກການຈະເລີນພັນ, ວຽກທີ່ໄດ້ຮັບຄ່າຈ້າງ ແລະ ບໍ່ໄດ້ຮັບຄ່າຈ້າງ.

ການພິຈາລະນາທັງໝົດນີ້ ຖືເປັນກະແຈສຳຄັນ ເພື່ອແກ້ໄຂຄວາມບໍ່ສະເໝີພາບເທົ່າທຽມກັນ ແລະ ຊ່ອງຫວ່າງຫຼາຍໆຢ່າງ (ໂດຍສະເພາະລະຫວ່າງແມ່ຍິງ ແລະ ຜູ້ຊາຍ) ໃນຕະຫຼາດແຮງງານ. ການນຳໃຊ້ມູມມອງທາງເພດ ເຮັດໃຫ້ພວກເຮົາເຂົ້າໃຈເຖິງວິທີການທີ່ແຕກຕ່າງກັນ ທີ່ແຮງງານຍິງ ແລະ ຊາຍ ເຂົ້າໄປສູ່ຂົງເຂດເສດຖະກິດ. ໃນແງ່ນີ້ ພວກເຮົາໄດ້ສະເໜີຄວາມຄິດຂອງການແບ່ງແຍກໃນຕະຫຼາດແຮງງານ. ດັ່ງທີ່ພວກເຮົາໄດ້ເຫັນ, ມີການແບ່ງແຍກຫຼາຍປະເພດແຕກຕ່າງກັນ (ອາຊີບ, ແນວນອນ ແລະ ແນວຕັ້ງ) ທີ່ເປັນສາເຫດທີ່ແມ່ຍິງສ່ວນໃຫຍ່ລົງເອີຍດ້ວຍວຽກງານທີ່ບໍ່ປົກກະຕິ ແລະ ບໍ່ເປັນທາງການ, ມີຄຸນນະພາບຕໍ່າ ແລະ ສະຖານະພາບທີ່ຕໍ່າ. ໂດຍການເອົາໃຈໃສ່ເປັນພິເສດຕໍ່ຂະແໜງການທີ່ບໍ່ເປັນທາງການ, ພວກເຮົາຍັງສາມາດເຫັນໄດ້ເຖິງວິທີການທີ່ແຮງງານ (ໂດຍສະເພາະແຮງງານເພດຍິງ) ໃນຂະແໜງການນີ້ ໃຊ້ຊີວິດແນວໃດໃນສະພາບທີ່ບໍ່ໝັ້ນຄົງ ແລະ ມີຄວາມສ່ຽງ.

ການຄົງຢູ່ຂອງແບບແຜນທາງເພດ ແລະ ລຳດັບຊັ້ນທາງເພດ ຍັງສືບຕໍ່ເປັນອຸປະສັກຂອງຄວາມບໍ່ສະເໝີພາບລະຫວ່າງຍິງ-ຊາຍໃນຕະຫຼາດແຮງງານໃນທົ່ວໂລກ. ຄົງຈະເປັນເລື່ອງໄຮ້ເຫດຜົນທີ່ຈະຖືວ່າມີສູດມະຫັດສະຈັນໃນການຕໍ່ສູ້ກັບຄວາມບໍ່ສະເໝີພາບເທົ່າທຽມກັນ ທີ່ຢູ່ຢ່າງຫຼາກຫຼາຍໃນໂລກຂອງການເຮັດວຽກ. ແນວໃດກໍ່ຕາມ, ນະໂຍບາຍສາທາລະນະເພື່ອການຫັນປ່ຽນ (ໃນລະດັບໂລກ, ລະດັບຊາດ, ລະດັບທ້ອງຖິ່ນ) ສາມາດເປັນເຄື່ອງມືທີ່ເປັນປະໂຫຍດສຳລັບການແກ້ໄຂບັນຫາ ແລະ ມຸ່ງໄປສູ່ຄວາມເທົ່າທຽມທາງເພດໄດ້.

ໃນຂະນະດຽວກັນ, ພວກເຮົາຍັງໄດ້ຍົກໃຫ້ເຫັນເຖິງຄວາມກ່ຽວຂ້ອງກັບວາລະ 2030 ແລະ ເປົ້າໝາຍການພັດທະນາແບບຍືນຍົງຂອງສະຫະປະຊາຊາດ (SDGs), ໂດຍສະເພາະເປົ້າໝາຍ 5 ແລະ 8 (ແລະ ເປົ້າໝາຍຍ່ອຍທີ່ສອດຄ່ອງກັນ). ຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ວຽກງານທີ່ເໝາະສົມກັບຄວາມຕ້ອງການ ແມ່ນອົງປະກອບທີ່ຂາດບໍ່ໄດ້ຂອງການພັດທະນາຢ່າງຍືນຍົງ, ເຊິ່ງສະແດງໃຫ້ເຫັນອີກຄັ້ງໜຶ່ງເຖິງຄວາມຈຳເປັນໃນການນຳມູມມອງທາງເພດມາໃຊ້ເຂົ້າໃນການສົນທະນາ ປຶກສາຫາລືກ່ຽວກັບຄວາມຍືນຍົງ ແລະ ຕະຫຼາດແຮງງານ. ມູມມອງດັ່ງກ່າວນີ້ ຍັງຕ້ອງໄດ້ມີການພິຈາລະນາໃນເວທີຂອງການກຳນົດນະໂຍບາຍ, ເພື່ອພັດທະນາ ແລະ ປະຕິບັດນະໂຍບາຍທີ່ລະອຽດອ່ອນທາງເພດ.